ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 139...../ປທລ/2018
ວັນທີ: 13/6/2018

ບົດບັນທຶກ ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ I ປະຈຳປີ 2018
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ I ປະຈຳປີ 2018 ເມື່ອວັນທີ 01 ມິຖຸນາ 2018 ເວລາ 09:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານບໍລິສັດ ປິໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ, ຖະໜົນ ກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 31 ທ່ານ, ຖືຮຸ້ນລວມ 198,487,321 ຮຸ້ນ, ຄິດເປັນ 84.46% ຂອງ ຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມະຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ ໄດ້ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມະຊິກສະພາບໍລິຫານ	**ຕຳແໜ່ງ**
1. ທ່ານ ຈັນທອນ ສິດທິໄຊ	: ປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່.
2. ທ່ານ ນາງ ສະຫວັນທອງ ພົງສະຫວັນ	: ຮອງປະທານສະພາບໍລິຫານ.
3. ທ່ານ ນາງ ດາລີ ພົນເສນາ	: ສະມາຊິກສະພາບໍລິຫານ/ປະທານຄະນະກຳມະການກວດກາພາຍໃນ/ສະມາຊິກອິດສະລະ.
4. ທ່ານ ໝູພັນ ມະຫາພົນ	: ສະມາຊິກສະພາບໍລິຫານ/ກຳມະການກວດກາພາຍໃນ/ ສະມາຊິກອິດສະລະ.
5. ທ່ານ ໂພໄຊ ຈັນທະວົງສາ	: ສະມາຊິກສະພາບໍລິຫານ/ສະມາຊິກອິດສະລະ.
6. ທ່ານ ນາງ ຈັນທະດອນ ເມກສະຫວັນ	: ສະມາຊິກສະພາບໍລິຫານ.
7. ທ່ານ ບຸນຖັນ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

ໃນການປະຊຸມຄັ້ງນີ້, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ), ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ ແລະ ຜູ້ຖືຮຸ້ນລາຍຍ່ອຍ ເພື່ອເປັນຕົວ ແທນໃນການສັງເກດການໃນກອງປະຊຸມຄັ້ງນີ້.

ພິທີກອນໄດ້ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຄະແນນໃຫ້ທຸກທ່ານຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເມື່ອວັນທີ 27 ເມສາ 2018;

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາການແບ່ງໂຄງສ້າງຂອງບໍລິສັດອອກເປັນ 2 ບໍລິສັດລູກຄື:

1. ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊຶ່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ);
2. ບໍລິສັດຈັດຈຳໜ່າຍ (ຊຶ່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ).

ວາລະທີ 3: ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ ພິຈາລະນາ ແລະ ຮັບຮອງເອົາການໂອນຖ່າຍຊັບສິນບາງສ່ວນຂອງ ປທລ ໃຫ້ກັບ 2 ບໍລິສັດລູກ ຕາມອັດຕາສ່ວນທີ່ເໝາະສົມ ເພື່ອນຳໄປປະກອບເປັນທຶນ;

ວາລະທີ 4: ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາຕົວເລກຊັບສິນທີ່ໂອນໄປໃຫ້ກັບ 2 ບໍລິສັດລູກ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພາຍຫຼັງສຳເລັດການໂອນຖ່າຍຊັບສິນເຫຼົ່ານັ້ນ;

ວາລະທີ :5 ພິຈາລະນາ ແລະ ຮັບຮອງການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັ່ນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນຂາຮຸ້ນແກ່ບໍລິສັດລູກທັງ 2 ບໍລິສັດ ໃນອັດຕາສ່ວນການຖືຄອງຮຸ້ນແມ່ນອີງຕາມກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ.

ວິທີການລົງຄະແນນສຽງ:

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ; ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ເມື່ອສິ້ນສຸດການປະຊຸມໃນແຕ່ລະວາລະແລ້ວ ທ່ານປະທານຈະຂໍໃຫ້ທ່ານຜູ້ຖືຮຸ້ນລົງມະຕິຮັບຮອງວ່າ ເຫັນດີ ຫຼື ບໍ່ເຫັນດີ ຫຼັງຈາກນັ້ນເຈົ້າໜ້າທີ່ຈະຄິດໄລ່ຄະແນນ ແລະ ແຈ້ງຜົນຄະແນນໃຫ້ທີ່ປະຊຸມຮັບຊາບໃນແຕ່ລະວາລະທັນທີກ່ອນທີ່ຈະເລີ່ມການປະຊຸມໃນວາລະຖັດໄປ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລົບກວນທ່ານກະລຸນາຍົກມືຂຶ້ນພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດ

ລາຍງານການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ I ປະຈຳປີ 2018 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ທັງນີ້ເພື່ອໃຫ້ເກີດຄວາມໂປ່ງໃສໃນການນັບຄະແນນສຽງ ຂ້າພະເຈົ້າຂໍລືບກວນອາສາສະມັກຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດຈາກຜູ້ຖືຮຸ້ນຢ່າງໜ້ອຍ 1 ທ່ານມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ໂດຍລືບກວນທ່ານແຈ້ງຊື່, ນາມສະກຸນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຮຸ້ນ ຫຼື ຮັບມອບສິດຈາກຜູ້ຖືຮຸ້ນທ່ານໃດ ແລະ ຂໍຮຽນເຊີນທ່ານໄປທີ່ຈຸດນັບຄະແນນເລີຍ. ໃນກອງປະຊຸມມີຜູ້ຖືຮຸ້ນ 1 ຄົນຄື ທ່ານ ສຸບັນ ສຸດທິທຳ ເຊິ່ງເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ໄດ້ສະມັກມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ຮ່ວມກັບຄະນະກຳມະການບໍລິສັດ ແລະ ມອບໝາຍໃຫ້ຝ່າຍເລຂານຸການຂອງບໍລິສັດດຳເນີນການຮ່ວມນັບຄະແນນໃນແຕ່ລະວາລະ.

ຫຼັງຈາກນັ້ນທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ເປັນປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ I ປະຈຳປີ 2018 ມີລາຍລະອຽດດັ່ງນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເມື່ອວັນທີ 27 ເມສາ 2018

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໄດ້ຈັດຂຶ້ນໃນວັນທີ 27 ເມສາ 2018 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງຈາກ ທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳຄິດເຫັນດັ່ງນີ້:

- Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນວ່າ: ໃນການປະຊຸມຄັ້ງນີ້ ປທລ ໄດ້ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2018 ວ່າຈະຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2018 ໃນວັນທີ 29 ພຶດສະພາ 2018 ແລະ ຕໍ່ມາໄດ້ແຈ້ງໃໝ່ເປັນວັນທີ 01 ມິຖຸນາ 2018 ໂດຍເອກະສານຍັງເປັນເລກທີດຽວກັນ, ວັນທີດຽວກັນ ບໍລິສັດຄວນອອກເອກະສານແກ້ໄຂເນື້ອໃນດັ່ງກ່າວ ແລະ ເອກະສານກ່ຽວກັບສະມາຊິກອິດສະລະ ທີ່ຮັບມອບສິດຈາກຜູ້ຖືຮຸ້ນໄດ້ ບໍ່ຄວນສະແດງເລກບັດປະຈຳຕົວ.

- ທ່ານ ປະທານກອງປະຊຸມ ໄດ້ຕອບຄຳຖາມຕໍ່ທີ່ປະຊຸມ: ກອງປະຊຸມໄດ້ຮັບຊາບແລ້ວ ແລະ ຈະນຳເອົາໄປເປັນບົດຮຽນໃນການຈັດກອງປະຊຸມຄັ້ງຕໍ່ໄປ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມເພີ່ມເຕີມອີກ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີ 198,474,821 ສຽງ ຄິດເປັນ 99.99370 % ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ 12,500 ສຽງ ຄິດເປັນ 0.00630 % ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງເອົາການແບ່ງໂຄງສ້າງຂອງບໍລິສັດອອກເປັນ 2 ບໍລິສັດລູກ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້:

- ອີງຕາມດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 127/ອຄ, ລົງວັນທີ 25 ກໍລະກົດ 2016;
- ອີງຕາມແຈ້ງການຂອງກະຊວງການຄ້າ ກ່ຽວກັບການຈັດຕັ້ງປະຕິບັດດຳລັດຂອງ ນາຍົກລັດຖະມົນຕີ ກ່ຽວກັບ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 052/ຫອຄ.ກຄພນ ລົງວັນທີ 09 ມີນາ 2018.

ປທລ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບໂຄງສ້າງບໍລິສັດໃໝ່ໂດຍການແບ່ງ ປທລ ອອກເປັນ 2 ບໍລິສັດລູກຄື:

1. ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ);
2. ບໍລິສັດຈັດຈຳໜ່າຍ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ).

ຫຼັງຈາກ ທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳຄິດເຫັນດັ່ງນີ້:

- ❖ ທ່ານ ວິໄລຄຳ ພົງພິມຄຳ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນວ່າ: ພາຍຫຼັງທີ ປທລ ລະດົມທຶນຜ່ານຕະຫຼາດຫຼັກຊັບລາວ ຜົນປະກອບການຂອງບໍລິສັດໄປໄດ້, ແຕ່ໄລຍະຫຼັງມານີ້ບໍລິສັດປະສົບກັບບັນຫາຂາດທຶນ. ບໍລິສັດເຮັດຫຍັງແດ່ໃນການຂະຫຍາຍທຸລະກິດ ຢາກໃຫ້ບໍລິສັດເອົາແຜນລະອຽດມາຜ່ານຜູ້ຖືຮຸ້ນ ໃຫ້ເຫັນຊັດເຈນວ່າເງິນທີ ປທລ ລະດົມທຶນເອົາໄປເຮັດຫຍັງແດ່ ?
- ❖ ທ່ານ ປະທານກອງປະຊຸມ ໄດ້ຕອບຄຳຖາມຕໍ່ທີ່ປະຊຸມ: ທຸກໄລຍະຂອງການດຳເນີນທຸລະກິດ ບໍລິສັດໄດ້ນຳສະເໜີລະອຽດແຜນການດຳເນີນທຸລະກິດປະຈຳແຕ່ລະປີ ວ່າ: ບໍລິສັດ ສ້າງປ້ຳໃດຈັກປ້ຳ, ລົງທຶນໃສ່ປ້ຳໃດແດ່, ຄາດວ່າຈະໄດ້ກຳໄລ ຫຼື ຂາດທຶນເທົ່າໃດ ໂດຍຜ່ານກອງປະຊຸມສາມັນຜູ້ຖືຮຸ້ນ ທຸກໆປີ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມເພີ່ມເຕີມອີກ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການແບ່ງໂຄງສ້າງຂອງບໍລິສັດອອກເປັນ 2 ບໍລິສັດລູກ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ດ້ວຍຄະແນນສຽງຫຼາຍກ່ວາສອງສ່ວນສາມ (2/3) ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກ່ວາ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ດັ່ງນີ້:

- ເຫັນດີ 30 ທ່ານ, ຄິດເປັນ 96.77419 % ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 198,474,821 ສຽງ, ຄິດເປັນ 84.45737 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;

- ບໍ່ເຫັນດີ 1 ທ່ານ, ຄິດເປັນ 3.23 % ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 12,500 ສຽງ, ຄິດເປັນ 0.00532 % ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ວາລະທີ 3. ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ ພິຈາລະນາ ແລະ ຮັບຮອງເອົາ ການໂອນຖ່າຍຊັບສິນບາງສ່ວນຂອງ ປທລ ໃຫ້ກັບ 2 ບໍລິສັດລູກ ຕາມອັດຕາສ່ວນທີ່ ເໝາະສົມເພື່ອນຳໄປປະກອບເປັນທຶນ.

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ໃນການສ້າງຕັ້ງ 2 ບໍລິສັດລູກ ປທລ ຈຳເປັນຕ້ອງໄດ້ ໂອນຊັບສິນບາງສ່ວນຂອງບໍລິສັດ ເພື່ອປະກອບເປັນທຶນໃຫ້ກັບ 2 ບໍລິສັດລູກ ໂດຍອີງຕາມດຳລັດ ວ່າດ້ວຍທຸລະກິດນ້ຳ ມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017. ທຶນຈົດທະບຽນ ດັ່ງນີ້:

1. ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ) ມູນຄ່າ 150 ຕື້ ກີບ (ໜຶ່ງຮ້ອຍຫ້າສິບຕື້ກີບ) ຂຶ້ນໄປ, ໃນນີ້ຕ້ອງມີທຶນມູນອຽນ 60 ຕື້ກີບ (ຫົກສິບຕື້ກີບ);
2. ບໍລິສັດຈັດຈຳໜ່າຍ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ) ມູນຄ່າ 50 ຕື້ກີບ (ຫ້າສິບຕື້ກີບ) ຂຶ້ນໄປ, ໃນນີ້ຕ້ອງມີທຶນມູນອຽນ 5 ຕື້ກີບ (ຫ້າຕື້ກີບ);

ຫຼັງຈາກ ທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບ ຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳຄິດເຫັນດັ່ງນີ້:

❖ ທ່ານ ວິໄລຄຳ ພິງພິມຄຳ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນວ່າ:

1. ໃນສະພາບປັດຈຸບັນ ປທລ ຍັງຢູ່ໃນສະພາບຫຍຸ້ງຍາກ, ຖ້າຖ່າຍໂອນຊັບສິນບາງສ່ວນຂອງບໍລິສັດແມ່ (ປທລ) ໃຫ້ 2 ບໍລິສັດລູກ ແລ້ວບໍລິສັດແມ່ (ປທລ) ຈະເປັນຈັ່ງໃດ? ຈະບໍ່ຫຍຸ້ງຍາກຂຶ້ນຕື່ມບໍ?
2. ຖ້າ ປທລ ມີແຜນຈະໄປຫາຄູ່ຮ່ວມທຸລະກິດ, ຖ້າຫາຄູ່ຮ່ວມທຸລະກິດບໍ່ໄດ້, ປທລ ຈະອອກຮຸ້ນໃໝ່ບໍ່, ຖ້າ ອອກແລ້ວບໍ່ມີຄົນຊື້ເຮັດຈັ່ງໃດ? ຫຼື ປທລ ຈະຂາຍຊັບສິນທີ່ບໍລິສັດມີບໍ? ເພື່ອນຳເງິນມາໃຊ້ໜີ້, ມາບໍລິຫານ ແລະ ອື່ນໆ.
3. ຖ້າຖ່າຍໂອນຊັບສິນບາງສ່ວນຂອງ ປທລ ໄປແລ້ວ, 2 ບໍລິສັດລູກຈະເຮັດຫຍັງແດ່? ແລະ ປທລ ມີຄວາມ ໝັ້ນໃຈແນວໃດວ່າ 2 ບໍລິສັດລູກຈະສ້າງກຳໄລ ແລະ ນຳກຳໄລດັ່ງກ່າວມາແກ້ໄຂບັນຫາທີ ປທລ ມີໃນ ປັດຈຸບັນ.

❖ ທ່ານ ປະທານກອງປະຊຸມ ໄດ້ຕອບຄຳຖາມຕໍ່ທີ່ປະຊຸມ:

1. ປທລ ເປັນບໍລິສັດ ມະຫາຊົນ ການຈະແກ້ໄຂບັນຫາ ໂດຍການເອົາເງິນຂອງຄອບຄົວ ຫຼື ເງິນຕົນເອງ ມາໃຫ້ ບໍລິສັດຍືມກໍ່ຜິດກົດລະບຽບ, ຈະອອກຮຸ້ນໃໝ່ກໍ່ອອກບໍ່ໄດ້ ຍ້ອນບໍລິສັດບໍ່ມີກຳໄລ, ໃນປັດຈຸບັນ ປທລ ພົບ ຄວາມຫຍຸ້ງຍາກໃນການຂະຫຍາຍໂຕ ຍ້ອນສະພາບທຸລະກິດບໍ່ມີກຳໄລ.
2. ສ່ວນຄູ່ຮ່ວມຍຸດທະສາດ ທາງ ປທລ ໄດ້ເຊັນສັນຍາກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນລາຍລັກອັກສອນກ່ຽວກັບການເຂົ້າມາຮ່ວມທຶນເປັນທີ່ຮຽບຮ້ອຍແລ້ວ.

3. ສ່ວນການແຍກ ປທລ ໃຫ້ມີ 2 ບໍລິສັດລູກ ແມ່ນ ປທລ ແຍກແຕ່ຊັບສິນບັດມາໃຫ້ 2 ບໍລິສັດລູກ, ຖ້າບໍ່ແຍກດຽວນີ້ຕໍ່ໄປກໍ່ຕ້ອງໄດ້ແຍກຕາມກົດໝາຍ, ຖ້າບໍ່ໂອນຊັບສິນບັດມາຈະແຍກບໍລິສັດໄດ້ຈັ່ງໃດ, ການແຍກບໍ່ສັບສົນ ໂດຍບໍລິສັດຈະແຍກປໍ້ານ້ຳມັນ, ດິນ ແລະ ອື່ນໆ ແລ້ວ ບໍລິສັດຍັງຖືຮຸ້ນ 2 ບໍລິສັດລູກ 100 ສ່ວນຮ້ອຍ ແລະ 2 ບໍລິສັດ ຕ້ອງດຳເນີນທຸລະກິດຕາມນະໂຍບາຍລັດ, ທັງ 2 ບໍລິສັດລູກຈະເປັນບໍລິສັດບໍ່ມີໜີ້ ແລະ ເປັນບໍລິສັດທີ່ມີຖານລູກຄ້າຢູ່ແລ້ວ ແລະ 2 ບໍລິສັດ ສາມາດເພີ່ມທຶນເຂົ້າໄດ້ ເຮັດໃຫ້ບໍລິສັດມີສະພາບຄອງ, ຈະມີຄູ່ຮ່ວມທຶນເຂົ້າມາຊື້ຮຸ້ນ 2 ບໍລິສັດລູກ ເຮັດໃຫ້ທັງ 2 ບໍລິສັດມີເງິນທຶນ ແລະ ຈະແບ່ງເງິນດັ່ງກ່າວ ບາງສ່ວນໄປໃຊ້ໜີ້ທະນາຄານ ສ່ວນທີ່ເຫຼືອຈະໃຊ້ເປັນທຶນໝຸນວຽນຂອງ 2 ບໍລິສັດລູກ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມເພີ່ມເຕີມອີກ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ ພິຈາລະນາ ແລະ ຮັບຮອງເອົາການໂອນຖ່າຍຊັບສິນບາງສ່ວນຂອງ ປທລ ໃຫ້ກັບ 2 ບໍລິສັດລູກ ຕາມອັດຕາສ່ວນທີ່ເໝາະສົມ ເພື່ອນຳໄປປະກອບເປັນທຶນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ດ້ວຍຄະແນນສຽງຫຼາຍກ່ວາສອງສ່ວນສາມ (2/3) ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກ່ວາ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ດັ່ງນີ້:

- ເຫັນດີ 30 ທ່ານ, ຄິດເປັນ 96.77419 % ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 198,474,821 ສຽງ, ຄິດເປັນ 84.45737 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;
- ບໍ່ເຫັນດີ 1 ທ່ານ, ຄິດເປັນ 3.23 % ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 12,500 ສຽງ, ຄິດເປັນ 0.00532 % ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາຕົວເລກຊັບສິນທີ່ໂອນໄປໃຫ້ກັບ 2 ບໍລິສັດລູກ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພາຍຫຼັງສຳເລັດການໂອນຖ່າຍຊັບສິນເຫຼົ່ານັ້ນ.

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ພາຍຫຼັງ ປທລ ດຳເນີນການໂອນຊັບສິນໃຫ້ 2 ບໍລິສັດລູກ ແລະ ມີການແບ່ງສັດສ່ວນການຖືຄອງຮຸ້ນ ກັບ ບໍລິສັດ Puma Energy (Singapore) Pte. Ltd ສຳເລັດ. ປທລ ຈະແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບ.

ຫຼັງຈາກ ທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາຕົວ ເລກຊັບສິນທີ່ໂອນໄປໃຫ້ກັບ 2 ບໍລິສັດລູກ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພາຍຫຼັງສຳເລັດການໂອນຖ່າຍຊັບສິນເຫຼົ່ານັ້ນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ດ້ວຍຄະແນນສຽງຫຼາຍກ່ວາສອງສ່ວນສາມ (2/3) ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກ່ວາ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ດັ່ງນີ້:

- ເຫັນດີ 30 ທ່ານ, ຄິດເປັນ 96.77419 % ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 198,474,821 ສຽງ, ຄິດເປັນ 84.45737 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;
- ບໍ່ເຫັນດີ 1 ທ່ານ, ຄິດເປັນ 3.23 % ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 12,500 ສຽງ, ຄິດເປັນ 0.00532 % ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ວາລະທີ 5. ພິຈາລະນາ ແລະ ຮັບຮອງການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນຂາຮຸ້ນແກ່ບໍລິສັດລູກທັງ 2 ບໍລິສັດ ໃນອັດຕາສັດສ່ວນການຖືຄອງຮຸ້ນແມ່ນອີງຕາມກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ.

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ການເຊັນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ໃນຄັ້ງນີ້ ພາຍຫຼັງເຊັນສັນຍາເລັດແລ້ວ ບໍລິສັດ Puma Energy (Singapore) Pte. Ltd ຈະເອົາເງິນມາລົງທຶນໃນ 2 ບໍລິສັດລູກຂອງ ປທລ ປະມານ 49% ແລະ ປທລ ຈະຖືຮຸ້ນ 51%.

ຫຼັງຈາກ ທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳຄິດເຫັນດັ່ງນີ້:

❖ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນວ່າ:
1. ບໍລິສັດ Puma Energy (Singapore) Pte. Ltd ທີ່ຈະເຂົ້າມາເອີ້ນວ່າ: ເປັນພັນທະມິດທາງຍຸດທະສາດ ຫຼື ພັນທະມິດເສີມກຳລັງ (Strategic Partner or strategy partner) ແບບໃດເໝາະສົມກ່ວາກັນ?
2. ວາລະທີ 3 ຫາ ວາລະທີ 5 ກ່ຽວກັບການມອບສິດໃຫ້ສະພາບໍລິຫານລົງລາຍເຊັນແທນຜູ້ຖືຮຸ້ນ, ຜູ້ທີ່ມີອຳນາດລົງນາມບໍ່ຄວນແມ່ນທ່ານດຽວ, ຖ້າທ່ານນັ້ນລົງນາມໄປອາດຈະມີບາງຢ່າງຜິດພາດ ຄວນມີອີກໜຶ່ງທ່ານມາຊ່ວຍແກ້ໄຂ, ຖ້າເປັນສິ່ງທີ່ທ່ານປະກາດອອກໄປສູ່ສາທາລະນະຊົນຜ່ານທາງເວັບໄຊແລ້ວ ມັນເກີດມີຂໍ້ຜິດພາດທ່ານກໍ່ຕ້ອງແກ້ໄຂຜ່ານຊ່ອງທາງເດີມ, ຕ້ອງມີການປະກາດວ່າອັນທີ່ອອກໄປແລ້ວມັນປ່ຽນໃໝ່ເປັນຫຍັງ.

❖ ທ່ານ ປະທານກອງປະຊຸມ ໄດ້ຕອບຄຳຖາມຕໍ່ທີ່ປະຊຸມ:
1. ເປັນຄູ່ຮ່ວມຍຸດທະສາດ ບໍ່ແມ່ນນາຍທຶນມາສະໜັບສະໜຸນ ຈະມີທີມບໍລິຫານມາຢູ່ນຳ ປທລ ຊ່ວຍບໍລິຫານຈັດການ ແລະ ຖ່າຍຖອດຄວາມຮູ້ໃຫ້ກັບທີມງານລາວ.
2. ປທລ ຈະສຶບທົບກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ ຕະຫຼາດຫຼັກຊັບລາວ ເພື່ອເຮັດໃຫ້ມັນຖືກຕ້ອງ.

❖ ທ່ານ ວິໄລຄຳ ພິງພິມຄຳ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນວ່າ:

1. ຂໍໃຫ້ທາງຄະນະຜູ້ບໍລິຫານໄດ້ນຳສະເໜີ ຜູ້ບໍລິຫານຂອງ 2 ບໍລິສັດລູກ ແມ່ນໃຜ? ມີແຜນກຳນົດໄວ້ ຫຼື ບໍ?
2. ທັງ 2 ບໍລິສັດລູກ ເປັນບໍລິສັດຈຳກັດ ການຄວບຄຸມການດຳເນີນທຸລະກິດ ຫຼື ວ່າການຕັດສິນໃຈຕ່າງໆ ແມ່ນໃຜຮັບຜິດຊອບ?

❖ ທ່ານ ປະທານກອງປະຊຸມ ໄດ້ຕອບຄຳຖາມຕໍ່ທີ່ປະຊຸມ:

1. ຜູ້ບໍລິຫານແມ່ນລະຫວ່າງບັນດາຜູ້ບໍລິຫານບໍລິສັດແມ່ (ປທລ) ຮ່ວມກັບສະພາບໍລິຫານຂອງ 2 ບໍລິສັດລູກ ຄັດເລືອກເອົາຜູ້ບໍລິຫານມາຈາກຕ່າງປະເທດ, ຝ່າຍການເງິນຈາກປະເທດສິງກະໂປ, ຝ່າຍບໍລິຫານມາຈາກ ປະເທດຝຣັ່ງ ແລະ ທຸກຝ່າຍລ້ວນມີປະສົບການ.
2. ທັງ 2 ບໍລິສັດລູກ ຂຶ້ນກັບບໍລິສັດແມ່ (ປທລ) ຍ້ອນວ່າ ປທລ ຖືຮຸ້ນ 2 ບໍລິສັດລູກ 100 ສ່ວນຮ້ອຍ ແຕ່ຜູ້ ບໍລິຫານບໍ່ແມ່ນຊຸດດຽວກັນ ໂດຍຫຼັກການ ຜູ້ບໍລິຫານເຮັດໜ້າທີ່ບໍລິຫານບໍລິສັດແມ່ (ປທລ) ແລ້ວ ຈະໄປ ບໍລິຫານ 2 ບໍລິສັດລູກອີກແມ່ນບໍ່ໄດ້, ສ່ວນຜົນປະໂຫຍດທັງໝົດກໍ່ສົ່ງໃຫ້ບໍລິສັດແມ່ (ປທລ) ຕາມ ສັດສ່ວນ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມເພີ່ມເຕີມອີກ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນຂາຮຸ້ນແກ່ບໍລິສັດລູກທັງ 2 ບໍລິສັດ ໃນອັດຕາສັດສ່ວນການຖືຄອງຮຸ້ນແມ່ນອີງຕາມ ກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ດ້ວຍຄະແນນສຽງຫຼາຍກ່ວາສອງສ່ວນສາມ (2/3) ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກ່ວາ ແປດສິບສ່ວນຮ້ອຍ (80%) ຂອງຈຳ ນວນຮຸ້ນທີ່ຖອກແລ້ວທັງໝົດ ດັ່ງນີ້:

- ເຫັນດີ 30 ທ່ານ, ຄິດເປັນ 96.77419 % ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 198,474,821 ສຽງ, ຄິດເປັນ 84.45737 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;
- ບໍ່ເຫັນດີ 1 ທ່ານ, ຄິດເປັນ 3.23 % ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 12,500 ສຽງ, ຄິດເປັນ 0.00532 % ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຫຼັງຈາກນັ້ນ ທ່ານ ຈັນທອນ ສິດທິໄຊ ໄດ້ກ່າວໃນຕອນທ້າຍຕື່ມອີກວ່າ:ໃນໄລຍະຫຼາຍປີຜ່ານມາ, ກ່ອນໜ້າທີ່ ປທລ ຈະເຂົ້າ ຕະຫຼາດຫຼັກຊັບ ມີຜົນປະກອບການດີ ແຕ່ຫຼັງເຂົ້າຕະຫຼາດຫຼັກຊັບລາວແລ້ວ ຂ້າພະເຈົ້າຢາກໃຫ້ທ່ານໄດ້ ເບິ່ງຕົວຈິງ ໃນໄລຍະຊຸມປີຜ່ານມາມັນເກີດຫຍັງຂຶ້ນແດ່ ກັບເສດຖະກິດ, ສັງຄົມ ແລະ ບ້ານເມືອງ ໂດຍສະເພາະທຸລະ ກິດນ້ຳມັນເຊື່ອໄຟ ມັນມີການໜັ່ງຕີງ, ມັນເຮັດໃຫ້ສະພາບຄວາມໝັ້ນທ່ຽງຂອງອຸດສາຫະກຳນ້ຳມັນເຊື່ອໄຟມີບັນຫາ ກະທົບໃນຫຼາຍໆດ້ານ, ຂ້າພະເຈົ້າ ຈຶ່ງຢາກເວົ້າວ່າ ຜູ້ຖືຮຸ້ນບາງທ່ານອາດຈະບໍ່ເຂົ້າໃຈ ແລະ ຂ້າພະເຈົ້າ ຈະເຮັດໃຫ້ທຸກ ທ່ານເຂົ້າໃຈໝົດທຸກຄົນແມ່ນເປັນໄປບໍ່ໄດ້, ເຮັດໃຫ້ທຸກທ່ານສະໜັບສະໜຸນ ຂ້າພະເຈົ້າ ກໍ່ເປັນໄປບໍ່ໄດ້ ຂ້າພະເຈົ້າ ຈຶ່ງ ຢາກຂໍໂອກາດນຳພວກທ່ານໃຫ້ ຂ້າພະເຈົ້າ ໄດ້ແກ້ໄຂບັນຫາ ແລະ ສ່ວນໃຫຍ່ຂອງບັນຫາເປັນບັນຫາທີ່ບໍ່ໄດ້ສ້າງຂຶ້ນເອງ ແລະ ຈະພະຍາຍາມແກ້ໄຂໃຫ້ມັນສຳເລັດ.

ການປັບປຸງໂຄງສ້າງແບບນີ້ຈະເປັນການດີຕໍ່ທຸກທ່ານ ແລະ ເປັນທາງອອກທີ່ດີທີ່ສຸດສຳລັບບໍລິສັດ, ຂ້າພະເຈົ້າ ໃນນາມຜູ້ກໍ່ຕັ້ງອົງກອນນີ້ ຕັ້ງແຕ່ເລີ່ມຕົ້ນຈົນຮອດປັດຈຸບັນ ສາມາດສ້າງອາຄານບໍລິສັດ, ຂະຫຍາຍປ້ຳນ້ຳມັນໄດ້ຫຼາຍ ກ່ວາ 130 ປ້ຳ ເປັນຕົ້ນ. ໃນການປັບປຸງໂຄງສ້າງຄັ້ງນີ້ ມີຜູ້ຮ່ວມທຶນເຂົ້າມາ ແລະ ປທລ ກໍ່ຈະມີການຊຸກເຊີຍໃຫ້ຜູ້ຖືຮຸ້ນ ດ້ວຍການເອົາ premium ຈາກການລະດົມທຶນມາຈ່າຍເປັນເງິນປັນຜົນທີ່ຜູ້ຖືຮຸ້ນ ທົດແທນ 2 ປີທີ່ບໍລິສັດບໍ່ໄດ້ຈ່າຍ ເງິນປັນຜົນ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ຈັນທອນ ສິດທິໄຊ ປະທານກອງປະຊຸມ ໄດ້ກ່າວຂອບໃຈ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດລັກຊັບລາວ ບັນດາຜູ້ຖືຮຸ້ນ, ຜູ້ຮັບມອບສິດ ແລະ ຜູ້ທີ່ກ່ຽວຂ້ອງທຸກ ພາກສ່ວນ ທຸກທ່ານ ທີ່ໄດ້ສະລະເວລາມາຮ່ວມປະຊຸມໃນມື້ນີ້ ເຮັດໃຫ້ການປະຊຸມມື້ນີ້ສຳເລັດໄປໄດ້ດ້ວຍດີ.

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆຕື່ມອີກ ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມເວລາ 11:25 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

(ເຊັນຕາງ) ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH